6/25/2024 11:22:03 AM

ປັບປຸງ ວັນທີ 25.6.24

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການລະດັບຊາດ ປັບປຸງ

ລັດຖະທຳມະນູນແຫ່ງຊາດ ແຫ່ງ ສປປ ລາວ ເລກທີ /ຄລຊ

ນະຄອນຫຼວງວຽງຈັນ, ວັນທີ

ຮ່າງ

# ບົດປະເມີນຜົນ
# ການຈັດຕັ້ງປະຕິບັດລັດຖະທຳມະນູນ ແຫ່ງ ສປປ ລາວ
# ສະບັບປີ 2015 (ໄລຍະ 2015 ຫາ ປີ 2024)

- ອີງຕາມ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 15/ກມສພ, ລົງວັນທີ 22 ພຶດສະພາ 2024 ວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປີ 2015;
- ອີງຕາມ ກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021 ມາດຕາ 124 ແລະ ມາດຕາ 125.

ເພື່ອເຮັດໃຫ້ການປັບປຸງລັດຖະທຳມະນູນ ສະບັບປີ 2015 ມີປະສິດທິພາບ, ປະສິດທິຜົນ ແລະ ສຳເລັດຜົນທັນຕາມກຳນົດເວລາ, ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ໄດ້ມີບົດປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 (ໄລຍະ 2015 ຫາ ປີ 2024) ດັ່ງນີ້:

## I. ສະພາບລວມໃນການການຈັດຕັ້ງປະຕິບັດ ລັດຖະທຳມະນູນ ແຫ່ງ ສປປ ລາວ

### 1. ລັດຖະທຳມະນູນ ສະບັບທຳອິດ

ພາຍຫຼັງປະເທດຊາດ ໄດ້ຮັບການປົດປ່ອຍ ແລະ ໄດ້ສ້າງຕັ້ງເປັນ ປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ ປີ 1975, ອັນໄດ້ໄຂສັງກາດໃໝ່, ສັງກາດທີ່ປະເທດຊາດມີເອກະລາດ ແລະ ປະຊາຊົນບັນດາເຜົ່າໄດ້ມີອິດສະຫຼະພາບຢ່າງແທ້ຈິງ, ຊີວິດຂອງສັງຄົມ ໄດ້ຮຽກຮ້ອງໃຫ້ລັດຕ້ອງມີລັດຖະທຳມະນູນ ແລະ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບທຳອິດຈຶ່ງໄດ້ຖືກສ້າງຂຶ້ນ ໂດຍແມ່ນກອງປະຊຸມສະໄໝສາມັນ ຄັ້ງທີ 6 ຂອງສະພາປະຊາຊົນສູງສຸດ ຊຸດທີ II ພິຈາລະນາຮັບຮອງເອົາໃນວັນທີ 14 ສິງຫາ 1991 ແລະ ປະກາດໃຊ້ໃນວັນທີ 15 ສິງຫາ 1991 ຕາມລັດຖະດຳລັດ ຂອງປະທານປະເທດ ສະບັບເລກທີ 55/ປທປທ, ລົງວັນທີ 15 ສິງຫາ 1991 ເນື້ອໃນລັດຖະທຳມະນູນ ສະບັບນີ້ ປະກອບມີ 10 ໝວດ ແລະ 80 ມາດຕາ ໂດຍໄດ້ກຳນົດ ລະບອບການເມືອງ; ລະບອບເສດຖະກິດ ແລະ ສັງຄົມ; ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ; ສະພາແຫ່ງຊາດ; ປະທານປະເທດ; ລັດຖະບານ; ການປົກຄອງທ້ອງຖິ່ນ; ອົງການຕຸລາການ; ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ ແລະ ນະຄອນຫຼວງ ຊຶ່ງໄດ້ຮັບການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍອອກເປັນກົດໝາຍແຕ່ລະຂົງເຂດວຽກງານ ແລະ ເປັນຂົດໝາຍປະຫວັດສາດໃນການສ້າງລັດ ທີ່ປົກຄອງດ້ວຍກົດໝາຍ ຢູ່ໃນປະເທດເຮົາ ເຮັດໃຫ້ການປົກປັກຮັກສາ ແລະ ສ້າງສາປະເທດຊາດ ໄດ້ດຳເນີນຢ່າງຕໍ່ເນື່ອງ.

**2. ການປັບປຸງລັດຖະທຳມະນູນ ປີ 2003**

ຜ່ານການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 1991 ມາເປັນເວລາ 12 ປີ ເຫັນວ່າ ພວກເຮົາ ມີຄວາມຈຳເປັນຕ້ອງໄດ້ມີການປັບປຸງເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນການຈັດຕັ້ງປະຕິບັດນະໂຍບາຍປ່ຽນແປງໃໝ່ ໃຫ້ເຂົ້າສູ່ລວງເລິກ. ສະນັ້ນ, ໃນປີ 2003 ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ V, ໄດ້ພິຈາລະນາ ຮັບຮອງເອົາລັດຖະທຳມະນູນສະບັບປັບປຸງ ຊຶ່ງປະກອບມີ 11 ໝວດ ແລະ 98 ມາດຕາ ເພີ່ມຂຶ້ນ 1 ໝວດ ຄື: ໝວດທີ 3 ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ເພີ່ມຂຶ້ນ 18 ມາດຕາ ໂດຍສະເພາະແມ່ນ ໃນໝວດທີ 2 ລະບອບເສດຖະກິດ ແລະ ສັງຄົມ ເພີ່ມຂຶ້ນ 10 ມາດຕາ.

**3. ການປັບປຸງລັດຖະທຳມະນູນ ປີ 2015**

ເພື່ອເປັນການປັບປຸງລະບົບອຳນາດແຫ່ງລັດ ໃຫ້ມີປະສິດທິພາບສູງ, ສ້າງບາດລ້ຽວໃໝ່ ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນໃນໄລຍະໃໝ່ ຈຶ່ງໄດ້ປັບປຸງລັດຖະທຳມະນູນ ສະບັບປີ 2003 ໃນປີ 2015, ຊຶ່ງເປັນການປັບປຸງຄັ້ງທີ່ 2 ແລະ ໄດ້ຖືກຮັບຮອງຈາກກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII, ຊຶ່ງປະກອບມີ 14 ໝວດ ແລະ 119 ມາດຕາ. ເພີ່ມຂຶ້ນ 3 ໝວດ ຄື: ໝວດທີ 8 ສະພາປະຊາຊົນທ້ອງຖິ່ນ, ໝວດທີ 11 ການກວດສອບແຫ່ງລັດ ແລະ ໝວດທີ 12 ຄະນະກຳມະການເລືອກຕັ້ງ ແລະ 21 ມາດຕາ.

ການສ້າງ, ປະກາດໃຊ້ ແລະ ປັບປຸງລັດຖະທຳມະນູນ ສອງຄັ້ງທີ່ຜ່ານມາ ເຮັດໃຫ້ນິຕິກຳສູງສຸດຂອງປະເທດເຮົາມີຄວາມຖືກຕ້ອງ, ສອດຄ່ອງກັບສະພາບການຕົວຈິງໃນແຕ່ລະໄລຍະ, ກາຍເປັນພາຫະນະພື້ນຖານໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ໃຫ້ດີຂຶ້ນ, ສ້າງເງື່ອນໄຂພື້ນຖານໃຫ້ແກ່ການສ້າງລັດເຮົາໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນເທື່ອລະກ້າວ.

## II. ຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015

**ກ. ດ້ານດີ-ຜົນສຳເລັດ**

1) ລັດເຮົາໄດ້ສືບຕໍ່ການຜັນຂະຫຍາຍລັດຖະທຳມະນູນ ສະບັບປີ 2015 ເປັນກົດໝາຍ ໃນຂົງເຂດຕ່າງໆ ຊຶ່ງມີຈຳນວນ 139 ສະບັບ, ໃນນີ້ ຂົງເຂດເສດຖະກິດ 61 ສະບັບ, ຂົງເຂດວັດທະນະທຳ-ສັງຄົມ 36 ສະບັບ, ຂົງເຂດການປົກຄອງ ແລະ ຍຸຕິທຳ 28 ສະບັບ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 9 ສະບັບ ແລະ ຂົງເຂດຕ່າງປະເທດ 5 ສະບັບ. ບັນດາກົດໝາຍເຫຼົ່ານັ້ນ ໄດ້ກາຍເປັນເຄື່ອງມືທີ່ໄດ້ການ, ໄດ້ງານໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ໃຫ້ນັບມື້ເປັນລະບົບຄົບຊຸດ ຂຶ້ນເທື່ອລະກ້າວ, ເປັນຫຼັກຄ້ຳປະກັນໃຫ້ແກ່ການປະຕິບັດ ແລະ ເສີມຂະຫຍາຍສິດເປັນເຈົ້າປະເທດຊາດຂອງປະຊາຊົນລາວບັນດາເຜົ່າ ແລະ ເປັນພື້ນຖານນິຕິກຳຄ້ຳປະກັນການກຳອຳນາດຂອງພັກເຮົາ;

2) ບັນດາກະຊວງ, ອົງການ ຂັ້ນສູນກາງ ແລະ ອົງການອຳນາດລັດຂັ້ນທ້ອງຖິ່ນ ໄດ້ເອົາໃຈໃສ່ໂຄສະນາເຜີຍແຜ່ ແລະ ສ້າງຂະບວນການ ກ່ຽວກັບ ວັນລັດຖະທຳມະນູນ ຢ່າງກວ້າງຂວາງດ້ວຍຫຼາຍຮູບ, ຫຼາຍແບບ ໂດຍສະເພາະແມ່ນ ໄດ້ຈັດຕັ້ງພິທີ ສະເຫຼີມສະຫຼອງ ວັນປະກາດໃຊ້ລັດຖະທຳມະນູນ, ຈັດປາຖະກະຖາ ຢູ່ບັນດາກະຊວງ, ອົງການ, ທ້ອງຖິ່ນ, ສະຖາບັນການສຶກສາ, ໂຮງຈັກໂຮງງານ ແລະ ໄດ້ເອົາລັດຖະທຳມະນູນເຂົ້າເປັນຫຼັກສູດການສຶກສາຂັ້ນຕ່າງໆ ເພື່ອສ້າງຄວາມຮັບຮູ້ເຂົ້າໃຈ ແລະ ຍົກສູງສະຕິເຄົາລົບລັດຖະທຳມະນູນ ແລະ ກົດໝາຍໃນທົ່ວສັງຄົມໃຫ້ນັບມື້ສູງຂຶ້ນ;

3) ບັນດາອົງການອຳນາດແຫ່ງລັດຂັ້ນຕ່າງໆ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດລັດຖະທຳມະນູນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ທີ່ລັດຖະທຳມະນູນໄດ້ກຳນົດໄວ້ ເຮັດໃຫ້ລະບົບການເມືອງແຕ່ລະຂັ້ນ ຂອງລະບອບປະຊາທິປະໄຕ ປະຊາຊົນ ໄດ້ຮັບການຊຸກຍູ້ສົ່ງເສີມ ແລະ ປັບປຸງໃຫ້ເຂັ້ມແຂງຂຶ້ນ; ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການຍົກລະດັບ ແລະ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດພາຍໃຕ້ລັດຖະທຳມະນູນ ແລະ ກົດໝາຍ ສາມາດດຶງດູດການລົງທຶນ ຂອງຕ່າງປະເທດມາພັດທະນາປະເທດຊາດຢ່າງຕໍ່ເນື່ອງ;

4) ລະບົບກົງຈັກການຈັດຕັ້ງຂອງລັດແຕ່ລະຂັ້ນ ໄດ້ຮັບການສ້າງຕັ້ງ ແລະ ປັບປຸງຕາມທິດກະທັດຮັດໜັກແໜ້ນ ໄປຕາມທັດສະນະອຳນາດລັດເປັນຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ພາຍໃຕ້ການນຳພາຂອງພັກປະຊາຊົນ ປະຕິວັດລາວ; ສາມາດເຄື່ອນໄຫວປະຕິບັດໜ້າທີ່ຢ່າງມີປະສິດທິພາບ, ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງຂອງພັກ ແລະ ລັດໃນໄລຍະໃໝ່. ລັດຖະບານ ຊຸດທີ VIII ມີ 18 ກະຊວງ ແລະ ຊຸດທີ IX ມີ 17 ກະຊວງ, ປັບປຸງອົງການກວດກາລັດຖະບານ ມາເປັນອົງການກວດກາແຫ່ງລັດ, ປັບປຸງລະບົບຕຸລາການ ໂດຍສະເພາະໄດ້ສ້າງຕັ້ງຄະນະສານປົກຄອງຢູ່ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ກໍ່ໄດ້ຮັບການປັບປຸງ ອັນໄດ້ສ້າງເງື່ອນໄຂໃຫ້ປະຊາຊົນສາມາດເຂົ້າເຖິງການບໍລິການຂອງລັດສະດວກຫຼາຍຂຶ້ນ;

5) ພວກເຮົາໄດ້ເອົາໃຈໃສ່ ປະຕິບັດກົນໄກການແບ່ງຂັ້ນຄຸ້ມຄອງຕາມທິດສາມສ້າງ: ຂັ້ນສູນກາງມີບັນດາກະຊວງ ແລະ ອົງການທຽບເທົ່າ ເຮັດພາລະບົດບາດ ຄຸ້ມຄອງມະຫາພາກເປັນຕົ້ນຕໍ, ຂັ້ນທ້ອງຖິ່ນມີແຂວງ, ເມືອງ ແລະ ບ້ານ ເຮັດພາລະບົດບາດຄຸ້ມຄອງຈຸລະພາກ ແລະ ບໍລິຫານລັດຕາມກົດໝາຍ ເຮັດໃຫ້ການຄຸ້ມຄອງ-ບໍລິຫານລັດໃນຂອບເຂດທົ່ວປະເທດ ມີຄວາມໂລ່ງລ່ຽນກົມກຽວກັນຂຶ້ນກວ່າເກົ່າ;

6) ພວກເຮົາໄດ້ເອົາໃຈໃສ່ປັບປຸງພາລະບົດບາດຂອງ ອົງການນິຕິບັນຍັດ, ອົງການບໍລິຫານລັດ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ແຕ່ລະຂັ້ນ ໃຫ້ສອດຄ່ອງກັບໜ້າທີ່ການເມືອງຂອງພັກ ແລະ ແທດເໝາະກັບສະພາບຕົວຈິງ ໃນແຕ່ລະໄລຍະ ເຮັດໃຫ້ອົງການດັ່ງກ່າວສາມາດເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ. ການບໍລິຫານ-ຄຸ້ມຄອງລັດດ້ວຍກົດໝາຍ ໄດ້ມີບາດກ້າວດີຂຶ້ນຢ່າງຕໍ່ເນື່ອງ, ສາມາດປົກປ້ອງສິດຜົນປະໂຫຍດ ຂອງລັດ, ລວມໝູ່ ແລະ ຂອງປະຊາຊົນບັນດາເຜົ່າໄດ້ເປັນຢ່າງດີ. ສິ່ງສຳຄັນໄດ້ສ້າງຕັ້ງສະພາປະຊາຊົນຂັ້ນແຂວງຄືນໃໝ່ ເພື່ອເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການອຳນາດລັດຂັ້ນທ້ອງຖິ່ນ, ປະຕິບັດພາລະບົດບາດພິຈາລະນາ ແລະ ຮັບຮອງເອົານິຕິກຳ ທີ່ບັງຄັບທົ່ວໄປຂອງທ້ອງຖິ່ນ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດຂັ້ນທ້ອງຖິ່ນ;

7) ບັນດາອົງການສິດອຳນາດແຫ່ງລັດຂັ້ນຕ່າງໆ ໄດ້ເອົາໃຈໃສ່ຊຸກຍູ້, ຕິດຕາມກວດກາ ການປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ແຕ່ລະປີ ແລະ 5 ປີ ເຂົ້າສູ່ລະບຽບແບບແຜນ, ນຳເອົາຜົນປະໂຫຍດມາໃຫ້ປະເທດຊາດ ແລະ ປະຊາຊົນບັນດາເຜົ່ານັບມື້ຫຼາຍຂຶ້ນ;

8) ບັນດາອົງການສິດອຳນາດແຫ່ງລັດ ຍັງໄດ້ເອົາໃຈໃສ່ປະຕິບັດສິດ ແລະ ພັນທະຕໍ່ສາກົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ລວມທັງໄດ້ຫັນສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ມາເປັນກົດໝາຍ ຫຼື ນິຕິກຳໃຕ້ກົດໝາຍ ເຮັດໃຫ້ບັນດາປະເທດໃນໂລກ, ອົງການຈັດຕັ້ງລະດັບພາກພື້ນ ແລະ ສາກົນ ມີຄວາມເຊື່ອໝັ້ນຕໍ່ພັກ ແລະ ລັດເຮົາຫຼາຍຂຶ້ນ, ຍົກສູງບົດບາດອິດທິພົນຂອງລະບອບໃໝ່ ແລະ ປະເທດຊາດ ໃນເວທີສາກົນ ຊຶ່ງສະແດງອອກ ປະເທດເຮົາໄດ້ຖືກເລືອກຕັ້ງເປັນຮອງປະທານອົງການສະຫະປະຊາຊາດ 2 ຄັ້ງ ຄື: ສະໄໝທີ 50

ແລະ 76, ໄດ້ເຂົ້າຮ່ວມເປັນສະມາຊິກຂອງ (ASEAN), ອົງການລັດຖະສະພາສາກົນ (IPU), ອົງການຈັດຕັ້ງລັດສະຖະພາ ອາຊີຕາ ເວັນອອກສຽງໃຕ້ (ASEAN) ແລະ ອົງການຈັດຕັ້ງສາກົນອື່ນຫຼາຍອົງການ; ອັນທີ່ພົ້ນເດັ່ນ ປະເທດເຮົາໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມ ASEAN SUMMIT ແລະ ກອງປະຊຸມລັດຖະສະພາ ASEAN ເປັນເທື່ອທີ 2;

9) ຄະນະພັກແຕ່ລະຂັ້ນ ກໍໄດ້ເອົາໃຈໃສ່ປັບປຸງແບບແຜນນຳພາ ແລະ ກຳອຳນາດຕາມກົດໝາຍໄດ້ດີຂຶ້ນ ໂດຍຕິດແໜ້ນກັບການຍົກສູງປະສິດທິພາບໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ແລະ ການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ.

**ຂ. ດ້ານອ່ອນ-ຂໍ້ຄົງຄ້າງ**

ຄຽງຄູ່ກັບດ້ານດີ ແລະ ຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ ພວກເຮົາຍັງມີຈຸດອ່ອນ ຂໍ້ຄົງຄ້າງຈຳນວນໜຶ່ງ ທີ່ເລັ່ງທວງໃຫ້ຕ້ອງແກ້ໄຂ ດັ່ງນີ້:

1) ການຄົ້ນຄວ້າຫັນເອົາເນື້ອໃນລັດຖະທຳມະນູນ ເປັນກົດໝາຍ ເຖິງວ່າພວກເຮົາໄດ້ມີຄວາມພະຍາຍາມສູງ ແຕ່ກໍຍັງຊັກຊ້າ, ການສ້າງ ແລະ ປັບປຸງກົດໝາຍຈຳນວນໜຶ່ງ ມີລັກສະນະຟ້າວຟັ່ງ, ແລ່ນນຳແຕ່ປະລິມານ ບໍ່ແທດເໝາະກັບສະພາບຕົວຈິງ ເຮັດໃຫ້ການປະຕິບັດຕົວຈິງມີຄວາມຫຍຸ້ງຍາກ ແລະ ເກີດມີຊ່ອງຫວ່າງໃຫ້ຄົນບໍ່ດີສວຍໃຊ້ ຊຶ່ງຈຳເປັນ ຕ້ອງໄດ້ປັບປຸງນິຕິກຳດັ່ງກ່າວເລື້ອຍໆ; ບັນດາອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ເຖິງວ່າ ມີກົດໝາຍ ແລະ ລະບຽບການ ແຕ່ການເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດໄວ້ ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ;

2) ເນື້ອໃນລັດຖະທຳມະນູນ ທີ່ຖືກຜັນຂະຫຍາຍເປັນກົດໝາຍໃນຂົງເຂດເສດຖະກິດ, ວັດທະນະທຳ-ສັງຄົມ, ການປົກຄອງ ແລະ ຍຸຕິທຳ ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດເຂັ້ມງວດ ແລະ ສັກສິດເທົ່າທີ່ຄວນ, ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ແລະ ການອານຸລັກຮັກສາວັດທະນະທຳ ບໍ່ທັນຍືນຍົງ; ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຍັງບໍ່ທັນໄດ້ຮັບການປົກປ້ອງຕາມກົດໝາຍຢ່າງແທ້ຈິງ; ຊັບພະຍາກອນທຳມະຊາດອັນລ້ຳຄ່າຂອງຊາດ ເຊັ່ນ: ທີ່ດິນ, ປ່າໄມ້, ບໍ່ແຮ່ ຊຶ່ງເປັນແຫຼ່ງລາຍຮັບງົບປະມານຂອງລັດ ຍັງບໍ່ທັນໄດ້ຮັບການຄຸ້ມຄອງຕາມລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ ເຮັດໃຫ້ຊັບພະຍາກອນຈຳນວນບໍ່ໜ້ອຍ ຖືກສູນເສຍ ແລະ ສ້າງຜົນກະທົບດ້ານລົບຕໍ່ສັງຄົມ, ປະເທດຊາດ, ການຍົກເວັ້ນການປະຕິບັດມາດຕາຂອງກົດໝາຍໄດ້ມີຢ່າງຕໍ່ເນື່ອງ ແລະ ກາຍເປັນປະເພນີທີ່ເປັນຊ່ອງຫວ່າງສ້າງຄວາມເສຍຫາຍໃຫຍ່ຫຼວງໃຫ້ກັບປະເທດຊາດ;

3) ການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ ຂອງບັນດາກະຊວງ, ອົງການ ແລະ ທ້ອງຖິ່ນຕ່າງໆ ເຖິງວ່າໄດ້ເຮັດ ແຕ່ຍັງບໍ່ທັນເລິກເຊິ່ງ, ກວ້າງຂວາງ ແລະ ທົ່ວເຖິງທຸກເປົ້າໝາຍໃນສັງຄົມ ຈຶ່ງເຮັດໃຫ້ປະຊາຊົນບັນດາເຜົ່າ ບໍ່ທັນຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ, ບໍ່ທັນເປັນເຈົ້າການເຂົ້າຮ່ວມປະຕິບັດລັດຖະທຳມະນູນ ເທົ່າທີ່ຄວນ, ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງຍັງບໍ່ທັນຖືກຕ້ອງ ແລະ ຄົບຖ້ວນ;

4) ກົງຈັກການຈັດຕັ້ງ ຂອງອົງການອຳນາດແຫ່ງລັດຂັ້ນຕ່າງໆ ຍັງບໍ່ທັນໄດ້ຮັບການປັບປຸງ ຢ່າງເປັນລະບົບ ແລະ ມີລັກສະນະວິທະຍາສາດ ເທົ່າທີ່ຄວນ, ການຄົ້ນຄວ້າສ້າງຕັ້ງ, ຍຸບ, ໂຮມ ແລະ ແຍກອອກ ຍັງບໍ່ທັນຮັບປະກັນລັກສະນະກະທັດຮັດ, ໜັກແໜ້ນ ເຮັດໃຫ້ຄຸນນະພາບ ແລະ ປະສິດທິພາບ ໃນການເຄື່ອນໄຫວວຽກງານ ຍັງບໍ່ທັນສູງເທົ່າທີ່ຄວນ ແລະ ການບໍລິຫານລັດດ້ວຍກົດໝາຍ ຍັງບໍ່ທັນເຂັ້ມງວດ, ຈຳນວນລັດຖະກອນກວມອັດຕາສ່ວນສູງທຽບໃສ່ພົນລະເມືອງ ແຕ່ຄຸນນະພາບບໍ່ຮັບປະກັນຕໍ່ການປະຕິບັດໜ້າທີ່ການເມືອງຂອງພັກ ແລະ ລັດເຮົາໃນແຕ່ລະ

ໄລຍະ; ປະກົດການຫຍໍ້ທໍ້ໃນກົງຈັກລັດຂັ້ນຕ່າງໆເຊັ່ນ: ອາດຍາສິດ, ສວຍໃຊ້ຖານະຕຳແໜ່ງ, ສໍ້ລາດບັງຫຼວງ, ຮັບສິນບົນ ຍັງມີລັກສະນາຊໍ້າເຮື້ອ ແກ້ໄຂບໍ່ເດັດຂາດ ແລະ ເຂັ້ມງວດ;

5) ການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາອົງການອຳນາດລັດ, ບັນດາອົງການຈັດຕັ້ງການເມືອງ-ສັງຄົມ ຍັງບໍ່ທັນຊັດເຈນ ແລະ ຈະແຈ້ງ, ບາງວຽກຊໍ້າຊ້ອນກັນ, ບາງວຽກບໍ່ມີຜູ້ຮັບຜິດຊອບ, ບາງວຽກພັດຍາດກັນເຮັດ ແລະ ບາງວຽກກໍບໍ່ທັນມີກົນໄກການປະສານສົມທົບເຊິ່ງກັນ ແລະ ກັນ ຢ່າງກົມກຽວ ເຮັດໃຫ້ການເຄື່ອນໄຫວວຽກງານ ບໍ່ທັນມີປະສິດທິພາບ, ປະສິດທິຜົນສູງເທົ່າທີ່ຄວນ;

6) ການກຳນົດ ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ ຍັງບໍ່ທັນລະອຽດ ຈະແຈ້ງ ແລະ ຄົບຖ້ວນ ເຮັດໃຫ້ປະຊາຊົນ ຍັງບໍ່ທັນຕື່ນໂຕ ແລະ ເປັນເຈົ້າການ ໃນການປົກປ້ອງສິດ ແລະ ປະຕິບັດພັນທະຂອງຕົນ ຕໍ່ປະເທດຊາດ ຕາມການກຳນົດຂອງລັດຖະທຳມະນູນ ໂດຍສະເພາະແມ່ນ ການປະຕິບັດພັນທະຂອງພົນລະເມືອງ;

7) ການເຄົາລົບ ແລະ ປະຕິບັດບັນດາສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ມີບາງກໍລະນີຍັງບໍ່ທັນເຂັ້ມງວດ ແລະ ດີເທົ່າທີ່ຄວນ.

### ຄ. ສາເຫດທີ່ພາໃຫ້ມີດ້ານດີ ແລະ ດ້ານອ່ອນ

#### 1. ສາເຫດທີ່ພາໃຫ້ມີດ້ານດີ

1) ການນຳພາ-ຊີ້ນຳຢ່າງໃກ້ຊິດ ຂອງຄະນະບໍລິຫານງານສູນກາງພັກ, ກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ກໍຄືຄະນະພັກຂັ້ນຕ່າງໆ;
2) ລັດຖະທຳມະນູນ ທີ່ໄດ້ສ້າງຂຶ້ນ ແລະ ປັບປຸງຜ່ານມານັ້ນ ແມ່ນຖືກຕ້ອງ ແລະ ສອດຄ່ອງກັບທາດແທ້ ຂອງລະບອບປະຊາທິປະໄຕ ປະຊາຊົນ ແລະ ສະພາບການຕົວຈິງ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃນແຕ່ລະໄລຍະ (ໃນຕະຫຼອດໄລຍະຜ່ານມາ);
3) ບັນດາອົງການອຳນາດແຫ່ງລັດຂັ້ນຕ່າງໆ ໄດ້ເອົາໃຈໃສ່ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ບໍລິຫານຄຸ້ມຄອງລັດດ້ວຍລັດຖະທຳມະນູນ ແລະ ກົດໝາຍ, ປະສານສົມທົບໃນການປະຕິບັດ ໜ້າທີ່ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນສັງຄົມ ບົນພື້ນຖານອີງໃສ່ລັດຖະທຳມະນູນ;
4) ປະຊາຊົນລາວບັນດາເຜົ່າສ່ວນຫຼາຍ ໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ເນື້ອໃນລັດຖະທຳມະນູນ ມີຄວາມຕັ້ງໜ້າປະຕິບັດສິດ ແລະ ພັນທະຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ມີຄວາມສາມັກຄີເປັນປຶກແຜ່ນບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍ;
5) ພວກເຮົາໄດ້ຮັບບົດຮຽນ ແລະ ການຊ່ວຍເຫຼືອສະໜັບສະໜູນອັນມີຄຸນຄ່າ ແລະ ເປັນປະໂຫຍດຈາກບັນດາປະເທດໃນໂລກ ເປັນຕົ້ນ ບັນດາປະເທດເພື່ອນມິດຍຸດທະສາດ ແລະ ອົງການຈັດຕັ້ງຕ່າງໆໃນພາກພື້ນ ແລະ ສາກົນ.

#### 2. ສາເຫດທີ່ພາໃຫ້ມີດ້ານອ່ອນ

1) ບັນດາອົງການທີ່ມີສິດສະເໜີຜັນຂະຫຍາຍລັດຖະທຳມະນູນ ເປັນກົດໝາຍ ຍັງຂາດຄວາມຮັບຜິດຊອບ ແລະ ບໍ່ທັນເປັນເຈົ້າການໃນການຄົ້ນຄວ້າ, ວິເຄາະວິໄຈຢ່າງເລິກເຊິ່ງ ກ່ຽວກັບແຜນການສ້າງ ແລະ ປັບປຸງກົດໝາຍແຕ່ຫົວທີ ກໍຄືປະເມີນເນື້ອໃນລະອຽດຂອງແຕ່ລະກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຍ້ອນຂາດພະນັກງານ, ນັກກົດໝາຍ ແລະ ນັກວິຊາການ ຊ່ຽວຊານ ທີ່ກ່ຽວຂ້ອງ;

2) ໃນການບໍລິຫານລັດຕາມລັດຖະທຳມະນູນຍັງເນັ້ນໜັກ ແລະ ໃຫ້ຄວາມສຳຄັນຕໍ່ນິຕິກຳໃຕ້ກົດໝາຍຫຼາຍກວ່າລັດຖະທຳມະນູນ, ບາງບ່ອນຍັງຖືເບົາຕໍ່ບົດບາດຂອງລັດຖະທຳມະນູນ, ການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນຊີວິດສັງຄົມ ຍັງບໍ່ທັນໄດ້ອີງໃສ່ລັດຖະທຳມະນູນເປັນຫຼັກ, ຍິ່ງກວ່ານັ້ນ ຍັງມີປະກົດການຖືເອົາຜົນປະໂຫຍດຂອງກຸ່ມກ້ອນ, ພັກພວກ ຫຼື ຜົນປະໂຫຍດສ່ວນຕົວບຸກຄົນເປັນໃຫຍ່ ຈຶ່ງເຮັດໃຫ້ການປະຕິບັດລັດຖະທຳມະນູນ ບໍ່ທັນເຂັ້ມງວດ ແລະ ສັກສິດເທົ່າທີ່ຄວນ;

3) ການໂຄສະນາ ເຜີຍແຜ່ ລັດຖະທຳມະນູນ ຍັງບໍ່ທັນແຂງແຮງ, ເລິກເຊິ່ງ ແລະ ທົ່ວເຖິງ, ຍັງບໍ່ທັນສາມາດປູກຈິດສຳນຶກໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ໃນທົ່ວສັງຄົມ, ຍັງບໍ່ທັນສ້າງຄວາມຊິນເຄີຍ ແລະ ແບບແຜນດຳລົງຊີວິດຕາມລັດຖະທຳມະນູນ ໃນສັງຄົມໄດ້ຢ່າງທົ່ວເຖິງ. ໃນດ້ານອື່ນ, ພົນລະເມືອງລາວ, ບຸກຄົນ ແລະ ນິຕິບຸກຄົນ ຈຳນວນບໍ່ໜ້ອຍ ຍັງເນັ້ນໜັກໃສ່ແຕ່ການປະຕິບັດສິດ ແຕ່ບໍ່ຢາກປະຕິບັດພັນທະຂອງຕົນຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ;

4) ຄະນະພັກ ແລະ ອົງການປົກຄອງບາງບ່ອນ ຍັງບໍ່ທັນເອົາໃຈໃສ່ປັບປຸງແບບແຜນນຳພາ ແລະ ຄຸ້ມຄອງບໍລິຫານລັດ ໃຫ້ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ, ພະນັກງານສະມາຊິກພັກ, ລັດຖະກອນ, ທະຫານ, ຕຳຫຼວດ ແລະ ເຈົ້າໜ້າທີ່ລັດ ຈຳນວນບໍ່ໜ້ອຍ ຍັງຂາດຄວາມເປັນແບບຢ່າງນຳໜ້າໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ຍັງຂາດຈັນຍາບັນ, ຈັນຍາທຳຮັບໃຊ້ປະຊາຊົນ.

## ໆ. ບາງບົດຮຽນທີ່ຖອດຖອນໄດ້

1) ບັນດາອົງການທີ່ມີສິດອຳນາດ ຕ້ອງໄດ້ຍົກສູງຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການໃນການຄົ້ນຄວ້າ ຫັນເນື້ອໃນຂອງລັດຖະທຳມະນູນ ເປັນກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ໃນນີ້ ໃຫ້ຖືເອົາຄຸນນະພາບເປັນຫຼັກ ແລະ ຖືເອົາປະລິມານເປັນສຳຄັນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕ້ອງສອດຄ່ອງກັບໜ້າທີ່ການເມືອງຂອງພັກ ແລະ ສະພາບການຕົວຈິງ ໃນການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງປະເທດຊາດໃນແຕ່ລະໄລຍະ;

2) ອົງການອຳນາດແຫ່ງລັດທຸກຂັ້ນ ຕ້ອງຖືສຳຄັນຕໍ່ລັດຖະທຳມະນູນ, ເອົາໃຈໃສ່ບໍລິຫານລັດໃຫ້ຖືກຕ້ອງຕາມລັດຖະທຳມະນູນ, ພ້ອມທັງເພີ່ມທະວີຄວາມສະເໝີພາບ ແລະ ຍຸຕິທຳໃນສັງຄົມ ບົນພື້ນຖານລັດຖະທຳມະນູນ, ສຶກສາອົບຮົມເຮັດໃຫ້ພົນລະເມືອງ ມີຄວາມຮັບຮູ້ທີ່ຖືກຕ້ອງ ແລະ ມີສະຕິສູງໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ;

3) ພະນັກງານ, ສະມາຊິກພັກ, ລັດຖະກອນ, ທະຫານ, ຕຳຫຼວດ ແລະ ເຈົ້າໜ້າທີ່ລັດທຸກພາກສ່ວນຕ້ອງຍົກສູງຄວາມເປັນແບບຢ່າງນຳໜ້າໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ເດັດດ່ຽວສະກັດກັ້ນ ແລະ ແກ້ໄຂທຸກປະກົດການທີ່ລະເມີດລັດຖະທຳມະນູນ, ຝືນຕໍ່ຈັນຍາບັນ ແລະ ຈັນຍາທຳ ຂອງພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ທີ່ຈະສ້າງພາບພົດບໍ່ດີ ເຮັດໃຫ້ເສື່ອມເສຍຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ໃນຖັນແຖວພະນັກງານ, ສະມາຊິກພັກ ເຮັດໃຫ້ປະຊາຊົນ

ຂາດຄວາມເຊື່ອໝັ້ນ, ເຫຼື້ອມໃສສັດທາຕໍ່ການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ ຕາມລັດຖະທຳມະນູນ;

4) ເສີມຂະຫຍາຍສິດເປັນເຈົ້າ ແລະ ປະຊາທິປະໄຕ ຂອງປະຊາຊົນບັນດາເຜົ່າ ບົນພື້ນຖານລັດຖະທຳມະນູນ, ສ້າງເງື່ອນໄຂໃຫ້ພະນັກງານ, ສະມາຊິກພັກ, ບັນດາການຈັດຕັ້ງຢູ່ຂັ້ນຮາກຖານ ແລະ ປະຊາຊົນບັນດາເຜົ່າ ໄດ້ມີໂອກາດເຂົ້າຮ່ວມ ປະກອບຄຳເຫັນເຂົ້າໃນການສ້າງ ແລະ ປັບປຸງ ລັດຖະທຳມະນູນ ເຮັດໃຫ້ການສ້າງ ແລະ ປັບປຸງ ກໍຄືການປະຕິບັດລັດຖະທຳມະນູນ ກາຍເປັນພາລະກິດລວມ ແລະ ເປັນຂະບວນການທີ່ເຂັ້ມແຂງ ຂອງທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນ;

5) ຄະນະພັກ ແລະ ອົງການປົກຄອງທຸກຂັ້ນ ເວລາໃດກໍຕ້ອງເອົາໃຈໃສ່ນຳພາ-ຊີ້ນຳ ແລະ ຄຸ້ມຄອງບໍລິຫານລັດ ຕາມລັດຖະທຳມະນູນ, ເດັດດ່ຽວຊີ້ນຳແກ້ໄຂບັນດາປະກົດການຫຍໍ້ທໍ້ຕ່າງໆ ທີ່ເປັນການລ່ວງລະເມີດ ລັດຖະທຳມະນູນ, ກົດໝາຍ ແລະ ສິດເປັນເຈົ້າຂອງປະຊາຊົນໃຫ້ເຂັ້ມງວດ ແລະ ທັນເວລາ.

## III. ການປັບປຸງລັດຖະທຳມະນູນ ສະບັບປີ 2015 ໃນຕໍ່ໜ້າ

### 1. ຄວາມສຳຄັນ ແລະ ຈຳເປັນ

ລັດຖະທຳມະນູນ ແມ່ນແນວທາງຂອງພັກກຳອຳນາດ ທີ່ຖືກຫັນເປັນກົດໝາຍພື້ນຖານຂອງຊາດ, ເປັນພາຫະນະທີ່ສຳຄັນພື້ນຖານ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຊົນຊັ້ນກຳອຳນາດ, ຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງປະເທດ. ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບທຳອິດ ໄດ້ປະກາດໃຊ້ໃນວັນທີ 15 ສິງຫາ 1991 ແລະ ໄດ້ຮັບການປັບປຸງ ປີ 2003, ປີ 2015 ແລະ ການປັບປຸງເທື່ອນີ້ເປັນ ຄັ້ງທີ 3. ໃນຕະຫຼອດໄລຍະດັ່ງກ່າວ, ລັດເຮົາກໍໄດ້ຜັນຂະຫຍາຍລັດຖະທຳມະນູນ ເປັນກົດໝາຍໃນຂົງເຂດຕ່າງໆ ມີຈຳນວນທັງໝົດ 167 ສະບັບ, ໃນນີ້, ຂົງເຂດເສດຖະກິດ 75 ສະບັບ, ຂົງເຂດວັດທະນະທຳ-ສັງຄົມ 42 ສະບັບ, ຂົງເຂດການປົກຄອງ ແລະ ຍຸຕິທຳ 32 ສະບັບ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 13 ສະບັບ, ຂົງເຂດຕ່າງປະເທດ 5 ສະບັບ, ຊຶ່ງລັດຖະທຳມະນູນ ແລະ ກົດໝາຍເຫຼົ່ານັ້ນ ໄດ້ກາຍເປັນພາຫະນະອັນແຫຼມຄົມ ໃນການດັດປັບການພົວພັນສັງຄົມຕາມແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ມີຫຼັກການຂອງພັກ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ມີຄວາມເຂັ້ມງວດ ແລະ ສັກສິດເປັນກ້າວໆ, ສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນທົ່ວສັງຄົມ ໄດ້ຮັບການຍົກສູງຂຶ້ນ ຊຶ່ງໄດ້ສ້າງເງື່ອນໄຂພື້ນຖານ ໃຫ້ແກ່ການສ້າງລັດ ສປປ ລາວ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວ, ແຕ່ຜ່ານການ ຈັດຕັ້ງປະຕິບັດເຫັນວ່າ ມີບາງບົດບັນຍັດຍັງບໍ່ທັນສອດຄ່ອງກັບສະພາບການໃໝ່.

ໃນດ້ານອື່ນ, ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ໃນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ມີຫຼັກການຂອງພັກເຮົາ ໃນໄລຍະແຕ່ນີ້ ຫາປີ 2055, ຄະນະບໍລິຫານງານສູນກາງພັກ ໄດ້ອອກມະຕິ ສະບັບເລກທີ 05/ຄບສພ, ລົງວັນທີ 5 ກັນຍາ 2023 ວ່າດ້ວຍ ການສືບຕໍ່ຍູ້ແຮງ ການຜັນຂະຫຍາຍແນວທາງປ່ຽນແປງໃໝ່ ສູ່ລວງເລິກ, ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາຂອງພັກ; ກົມການເມືອງສູນກາງພັກ ກໍໄດ້ອອກມະຕິ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່. ສະນັ້ນ, ຈຶ່ງມີຄວາມຈຳເປັນຢ່າງພາວະວິໄສ ທີ່ລັດເຮົາຈະຕ້ອງໄດ້ຄົ້ນຄວ້າ ແລະ ປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກ ແລະ ລັດເຮົາ ໃນໄລຍະໃໝ່ນີ້.

## 2. ຈຸດປະສົງ ແລະ ລະດັບຄາດໝາຍ

ການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ຄັ້ງນີ້ ແມ່ນແນໃສ່:

1) ສືບຕໍ່ຜັນຂະຫຍາຍແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ມີຫຼັກການຂອງພັກ ເປັນຂໍ້ບັນຍັດຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບໃໝ່ ເປັນຕົ້ນ ມະຕິຄະນະບໍລິຫານງານສູນກາງພັກ ວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລ່ວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາຂອງພັກ; ມະຕິກົມການເມືອງສູນການພັກ ກ່ຽວກັບການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່;
2) ປັບປຸງບາງບົດບັນຍັດກ່ຽວກັບລະບົບອົງການອຳນາດແຫ່ງລັດຂັ້ນຕ່າງໆ ເປັນຕົ້ນ ອົງການບໍລິຫານລັດຂັ້ນທ້ອງຖິ່ນ ໃຫ້ມີຄວາມສອດຄ່ອງກັບໜ້າທີ່ການເມືອງຂອງພັກ ແລະ ລັດ ໃນໄລຍະໃໝ່, ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ຢ່າງມີປະສິດທິພາບ, ປະສິດທິຜົນສູງຂຶ້ນ, ຮັບປະກັນການປະຕິບັດສອງໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສາປະເທດຊາດ ຂຶ້ນສູ່ຈຸດໝາຍສັງຄົມນິຍົມ;
3) ລັດຖະທຳມະນູນສະບັບໃໝ່ນີ້ ຕ້ອງສອດຄ່ອງກັບເນື້ອໃນພື້ນຖານຂອງໂຄງການ ການເມືອງຂອງພັກ ແລະ ມະຕິຕ່າງໆຂອງບັນດາກອງປະຊຸມໃຫຍ່ຂອງພັກເຮົາ ໃນຕໍ່ໜ້າ;
4) ເປັນບ່ອນອີງພື້ນຖານຮັບປະກັນໃຫ້ແກ່ການສ້າງ ແລະ ປັບປຸງກົດໝາຍ ໃນຕໍ່ໜ້ານີ້ໃຫ້ເປັນລະບົບຄົບຊຸດ, ສອດຄ່ອງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້;
5) ສູ້ຊົນປັບປຸງລັດຖະທຳມະນູນສະບັບໃໝ່ ໃຫ້ສຳເລັດກາງປີ 2025 ແລະ ສາມາດນຳເຂົ້າພິຈາລະນາ, ຮັບຮອງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX.

## 3. ເນື້ອໃນ

ການປັບປຸງລັດຖະທຳມະນູນເທື່ອນີ້ ແມ່ນສຸມໃສ່ຄົ້ນຄວ້າ ແລະ ປັບປຸງ ບາງໝວດ, ບາງມາດຕາທີ່ຈຳເປັນ ເປັນຕົ້ນແມ່ນ ໝວດກ່ຽວກັບການປົກຄອງທ້ອງຖິ່ນ ແລະ ອາດຈະຄົ້ນຄວ້າສະເໜີເພີ່ມບາງມາດຕາ ຫຼືບາງຂໍ້ບັນຍັດໃໝ່ ທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

## 4. ທິດຊີ້ນຳ

ທິດຊີ້ນຳໃນການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບນີ້ ມີດັ່ງນີ້:

1) ຮັບປະກັນການຍົກສູງບົດບາດນຳພາ ຂອງພັກປະຊາຊົນປະຕິວັດລາວ ຕິດແໜ້ນກັບການເຊີດຊູບົດບາດຄຸ້ມຄອງຂອງລັດ ປະຊາທິປະໄຕ ປະຊາຊົນ ແລະ ການປະຕິບັດສິດເປັນເຈົ້າປະເທດຊາດ ຂອງປະຊາຊົນລາວບັນດາເຜົ່າ ຊຶ່ງກຳມະກອນ, ກະສິກອນ ແລະ ນັກຮຽນຮູ້ປັນຍາຊົນ ເປັນຫຼັກແຫຼ່ງ;
2) ຮັບປະກັນການປະຕິບັດຫຼັກການລວມສູນປະຊາທິປະໄຕ ຫຼື ອຳນາດລັດເປັນເອກະພາບ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ;
3) ມີຈຸດສຸມ ແລະ ສອດຄ່ອງກັບມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ ສູ່ລ່ວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາຂອງພັກ ກໍຄື ມະຕິກົມການເມືອງສູນກາງພັກ ວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່;

4) ຮັບປະກັນລັກສະນະວິທະຍາສາດ ໃນການສ້າງ ແລະ ປັບປຸງນິຕິກຳ ໂດຍມີການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ; ຄົ້ນຄວ້າ ແລະ ກຳນົດເນື້ອໃນຈຸດສຸມຕົ້ນຕໍ ທີ່ຈະປັບປຸງໃຫ້ລະອຽດ, ຈະແຈ້ງ; ທາບທາມ ແລະ ລະດົມຄວາມເຫັນ, ສະຕິປັນຍາຂອງ ທົ່ວລະບົບການເມືອງ, ປະຊາຊົນລາວບັນດາເຜົ່າ, ນັກທຸລະກິດ ທັງພາກລັດ ແລະ ເອກະຊົນ ລວມທັງນັກລົງທຶນຕ່າງປະເທດ ຢູ່ ສປປ ລາວ ແລະ ມີການຍາດແຍ່ງບົດຮຽນທີ່ສອດຄ່ອງຂອງຕ່າງປະເທດ ເພື່ອເຮັດໃຫ້ເນື້ອໃນຂອງລັດຖະທຳມະນູນ ສະບັບໃໝ່ ມີຄວາມຖືກຕ້ອງ, ສອດຄ່ອງ, ຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້;
5) ສຸມໃສ່ຄົ້ນຄວ້າ, ປັບປຸງເນື້ອໃນໃຫຍ່ ທີ່ສຳຄັນຈຳນວນໜຶ່ງ ຂອງລັດຖະທຳມະນູນ ຫາກບໍ່ແມ່ນປັບປຸງໝົດສະບັບ ເຊັ່ນ: (1) ບັນຫາການກຳນົດບົດບາດນຳພາຂອງພັກ (ມາດຕາ 3 ລັດຖະທຳມະນູນ ສະບັບປີ 2015); (2) ບັນຫາຈຸດໝາຍສັງຄົມນິຍົມ?; (3) ບັນຫາການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ?; (4) ບັນຫາການກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງບັນດາອົງການອຳນາດແຫ່ງລັດຂັ້ນສູນກາງ; (5) ບັນຫາການກຳ ນົດການແບ່ງຂັ້ນການປົກຄອງທ້ອງຖິ່ນ ເປັນຕົ້ນ ຂັ້ນຕາແສງ ລວມທັງການກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ສາຍພົວພັນສາຍຕັ້ງ ແລະ ສາຍຂວາງ ຂອງການປົກຄອງທ້ອງຖິ່ນແຕ່ລະຂັ້ນ; (6) ບັນຫາການແບ່ງຂັ້ນຄຸ້ມຄອງ ລະຫວ່າງ ສູນກາງ ກັບ ແຂວງ-ນະຄອນຫຼວງ; ລະຫວ່າງແຂວງ-ນະຄອນຫຼວງ ກັບ ຂັ້ນເມືອງ-ນະຄອນ; ຂັ້ນຕາແສງ ແລະ ຂັ້ນບ້ານ. ນອກຈາກເນື້ອໃນໃຫຍ່ດັ່ງກ່າວນີ້ແລ້ວ ອາດຈະຄົ້ນຄວ້າ, ປັບປຸງບາງເນື້ອໃນຍ່ອຍ ທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ;
6) ການປັບປຸງລັດຖະທຳມະນູນ ໃຫ້ສົມທົບແໜ້ນ ລະຫວ່າງ ການຄົ້ນຄວ້າ ຂອງຄະນະກຳມະການລະດັບຊາດ ກັບການຍາດແຍ່ງຄວາມຄິດເຫັນ ຂໍ້ສະເໜີຂອງບັນດາຂະແໜງການ ແລະ ອົງການຂັ້ນສູນກາງ ແລະ ທ້ອງຖິ່ນຕ່າງໆ ລວມທັງຍາດແຍ່ງຄວາມເຫັນ ຂອງພາກທຸລະກິດ ລັດ ແລະ ເອກະຊົນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ; ລະດົມຄວາມເຫັນຢ່າງກວ້າງຂວາງຈາກປະຊາຊົນລາວບັນດາເຜົ່າ ດ້ວຍຫຼາຍຮູບການ ນັບທັງຜ່ານພາຫະນະສື່ມວນຊົນ.

**5. ວຽກຈຸດສຸມ**

ວຽກງານຈຸດສຸມໃນຕະຫຼອດໄລຍະປັບປຸງລັດຖະທຳມະນູນ ມີດັ່ງນີ້:

1) ດຳເນີນກອງປະຊຸມຄະນະກຳມະການລະດັບຊາດ ແລະ ຄະນະປະຈຳການ ເພື່ອພິຈາລະນາຕົກລົງ ກ່ຽວກັບ ແຜນການ, ແຜນດຳເນີນງານຂອງຄະນະ; ແຕ່ງຕັ້ງກອງເລຂາ, ອະນຸກຳມະການ ແລະ ໜ່ວຍງານຊ່ວຍວຽກຕ່າງໆ ລວມທັງກຳນົດຈະແຈ້ງ ກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່ ແລະ ວິທີເຮັດວຽກຂອງການຈັດຕັ້ງດັ່ງກ່າວ; ແບ່ງງານ, ແບ່ງຄວາມຮັບຜິດຊອບພາຍໃນ ແລະ ກຳນົດລະບອບແບບແຜນວິທີເຮັດວຽກ ແລະ ບັນຫາທີ່ມີຄວາມຈຳເປັນຮີບດ່ວນອື່ນ, ຮັບປະກັນການຈັດຕັ້ງປະຕິບັດວຽກງານປັບປຸງລັດຖະທຳມະນູນ ໃຫ້ທັນຕາມກຳນົດເວລາ ມີປະສິດທິຜົນ;
2) ຮີບຮ້ອນຄົ້ນຄວ້າ ແລະ ຂຶ້ນແຜນງົບປະມານ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານຄົ້ນຄວ້າ ແລະ ປັບປຸງລັດຖະທຳມະນູນ;
3) ດຳເນີນການປະເມີນ ການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ໄປຄຽງຄູ່ກັບການຄົ້ນຄວ້າ, ເກັບກຳຄວາມເຫັນ ຂໍ້ສະເໜີຕ່າງໆຕໍ່ການປັບປຸງເນື້ອໃນຂອງລັດຖະທຳມະນູນ ໂດຍຈັດເປັນ 4 ຈຸດຕາມຂົງເຂດ ວຽກງານຢູ່ອ້ອມຂ້າງສູນກາງ ແລະ 18 ຈຸດ ຢູ່ຂັ້ນທ້ອງຖິ່ນໂດຍຕິດພັນກັບການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນຂັ້ນແຂວງ-ນະຄອນຫຼວງ ໃຫ້ສຳເລັດໃນເດືອນກໍລະກົດ 2024 ນີ້;
4) ຈັດກອງປະຊຸມສຳມະນາວິທະຍາສາດ ກ່ຽວກັບການປັບປຸງເນື້ອໃນຕົ້ນຕໍ ຂອງລັດຖະທຳມະນູນ;
5) ແລກປ່ຽນບົດຮຽນກັບປະເທດເພື່ອນມິດຍຸດທະສາດ ກ່ຽວກັບການປັບປຸງລັດຖະທຳມະນູນ ໂດຍແຕ່ງຕັ້ງຄະນະໄປ ຫຼື ເຊີນຊ່ຽວຊານ ມາສຳມະນາແລກປ່ຽນຄວາມເຫັນ ຢູ່ພາຍໃນປະເທດ;

6) ສັງລວມບັນຫາໃຫຍ່ທີ່ສຳຄັນ ໃນການປັບປຸງລັດຖະທຳມະນູນ ເພື່ອລາຍງານຂໍທິດຊີ້ນຳຈາກກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ;
7) ດຳເນີນການຄົ້ນຄວ້າ ແລະ ປັບປຸງລັດຖະທຳມະນູນ ໃຫ້ສຳເລັດໂດຍພື້ນຖານ ໃນທ້າຍປີ 2024;
8) ລາຍງານຕໍ່ ກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ພິຈາລະນາຊີ້ນຳ ກ່ຽວກັບເນື້ອໃນຂອງຮ່າງລັດຖະທຳມະນູນ ສະບັບເບື້ອງຕົ້ນ. ຫຼັງຈາກນັ້ນ, ໃຫ້ສືບຕໍ່ປັບປຸງ ແລະ ລາຍງານຕໍ່ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 9 ສະໄໝທີ XI ແລະ ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX;
9) ຈັດຕັ້ງລະດົມຄວາມຄິດເຫັນຈາກການນຳ, ຜູ້ຊ່ຽວຊານ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກວິຊາການ, ນັກຮຽນຮູ້ປັນຍາຊົນ, ພະນັກງານບຳນານ, ນັກທຸລະກິດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຕ່າງໆ ແລະ ປະຊາຊົນລາວບັນດາເຜົ່າ ຕໍ່ຮ່າງລັດຖະທຳມະນູນ ສະບັບປັບປຸງໃໝ່;
10) ສືບຕໍ່ປັບປຸງຮ່າງລັດຖະທຳມະນູນ ແລ້ວລາຍງານຕໍ່ ກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ເພື່ອຂໍທິດຊີ້ນຳ; ປັບປຸງ ແລະ ລາຍງານຕໍ່ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 10 ສະໄໝທີ XI;
11) ສືບຕໍ່ປັບປຸງຮ່າງລັດຖະທຳມະນູນ ຕາມຈິດໃຈຊີ້ນຳຂອງສູນກາງພັກ ແລ້ວລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ສະເໜີຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ພິຈາລະນາ, ຮັບຮອງ;
12) ປະກາດໃຊ້ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2025 ຢ່າງເປັນທາງການ ໃນເດືອນ ກໍລະກົດ 2025; ຈັດພິມ, ແປເປັນພາສາຕ່າງປະເທດ ແລະ ແຈກຢາຍ ລັດຖະທຳມະນູນ ສະບັບປີ 2025;
13) ສະຫຼຸບ, ຕີລາຄາ ແລະ ຖອດຖອນບົດຮຽນ ກ່ຽວກັບການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015;
14) ປະຕິບັດວຽກງານ ທີ່ສຳຄັນ ແລະ ຈຳເປັນອື່ນ.

**6. ຜົນໄດ້ຮັບ**

ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ໃນໄລຍະເກືອບ 10 ປີ ທີ່ຜ່ານມາ ສາມາດເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ຄົ້ນຄວ້າ, ປັບປຸງເນື້ອໃນບົດບັນຍັດຂອງລັດຖະທຳມະນູນ ສະບັບປີ 2015 ທີ່ບໍ່ສອດຄ່ອງ ໃຫ້ມີເນື້ອໃນທີ່ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງກັບໜ້າທີ່ການເມືອງ ຂອງພັກ ແລະ ລັດເຮົາ ໃນໄລຍະໃໝ່, ກາຍເປັນກົດໝາຍພື້ນຖານສຳຄັນຂອງປະເທດຊາດ, ເປັນບ່ອນອີງໃຫ້ແກ່ການສ້າງ ແລະ ການປັບປຸງບັນດາກົດໝາຍ ເພື່ອເປັນເຄື່ອງມືຂອງລັດ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ, ສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາຂອງພັກ.

ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2024

**ຄະນະກຳມະການລະດັບຊາດ**
**ປັບປຸງລັດຖະທຳມະນູນ**